## *ດີໃຈນຳແມ່ຕູ້ຫຼາຍໆເດີ...*

ຮຽມຂໍໄຂຂ່າວຂໍ້ ພໍໄດ້ຮ່ຳຮອນຄິດ
ມິດເພື່ອນຄຣູຫຼັກເຈັດ ທຸກເຂດແດນຄວນຮູ້
ສາວເອື້ອຍຄຣູຄົນນີ້ ມີນາມແຝງຈິນລີຊື່
ທາງດ້ານງານຝີມື ສາວຫຼັກເຈັດ ຊື່ກ້ອງ ຄົນຍໍຍ້ອງທົ່ວແດນ

ບ່າວ Online ທຸກເຂດແຄວ້ນ ແຟນກອນກ່າວຮືຮາ
ຂຽນຜຍາທັງຄຳກອນ ປ່ອນລຳນຳເພງເສົ້າ
ສຽງຫຼາຍຄົນເຂົາເວົ້າ ສາວຫຼັກເຈັດ ຂຽນເກັ່ງ
ບໍ່ວ່າລຳນຳເພງ ຫຼືກາບກອນຮ້ອຍແກ້ວ ກະວີກ້ອມຮ້ອຍກອງ



ວານນີ້ ຂ້ອຍໄດ້ຍິນສຽງກຣິ່ງຮ້ອງ ກ້ອງສິ່ງໂທລະສັພ
ຮັບຂຶ້ນມາຟັງສຽງ ຍັງຈື່ຈຳສຳນຽງໄດ້
ທັງດີໃຈພາງເວົ້າ ວ່າເຮົາເປັນແມ່ຕູ້ຫນຸ່ມ ແລ້ວເດີ
ດຽວນີ້ເຮົາໄດ້ອູ້ມ ຫຼານນ້ອຍ ອຸ່ນຄີງ ດີໃຈເດ

ເປັນຜູ້ຍິງສົມມາດແມ້ງ ນ້ຳຕາຫຼັ່ງລົນໄຫຼ
ແມ່ຕູ້ດອນ ແສນດີໃຈ ຈຶ່ງໄດ້ໄຂໃຫ້ແຟນຮູ້

ໂທລະສັພທາຊູ້ ສາວເອື້ອຍຄຣູຫົວເຕິະເຕິ່ນ
ແມ່ຕູ້ ຫູັກເຈັດພາເພີນ ຄືໄດ້ເງິນຄ່າລ້ານ ໄດ້ຫຼານນ້ອຍຜູ່ຄູນ

ຍັງກະເປັນວຸ້ນໆ ອິລມ່ານ ສຽງເນືອງນອງ
ທັງຝ່າຍດອງກໍຄືກັນ ອ່າວກະສັນ ຈົນສະອື້ນ
ຢືນບໍ່ຍອມຢຸດຍິ້ມ ຄືໄດ້ຊີມກິນຕົ້ມໄກ່
ໃສ່ຊາຫົວນົກເຄົ້າ ເມົາຫົວຍິ້ມ ບໍ່ເຫືອດເຫີຍ

ລູກທັງສາມກໍຍິ້ມເປີ້ຍ ເຢີ້ຍຍອກແມ່ຍິນດີ
ແນວມີຫຼານຄົນທຳອິດ ໄດ້ຊິດຊົມດົມອູ້ມ
ແມ່ຕູ້ດອນກໍຫົວຍຸ້ມ ມີຊຸມແຊງໄດ້ສືບຕໍ່
ສຽງແຊວໆຢູ່ໂຮງຫມໍ ພໍປານສຽງອີ່ງຮ້ອງ ດັງກ້ອງບໍ່ຮູ້ອາຍ

ຂໍຝາກກອນນີ້ໃຫ້ ພ້ອມເອີ້ນສິ່ງຄວາມຍິນດີ
ທັງບຸຕຕີແລະມານດາ ຢ່າໄດ້ມີພັຍຕ້ອງ
ໃຫ້ເຈົ້າຄອງສຸຂລົ້ນ ທັງສອງຄົນແມ່ລູກອ່ອນ
ແມ່ຕູ້ດອນກໍໃຫ້ພົ້ນ ໂພຍພັຍຮ້າຍພະຍາດມານ

ຂໍໃຫ້ຫຼານຜູ່ນ້ອຍ ມີລົ້ນລື່ນປະຕິພານ
ວິທຍາຍານໄກ ຮຸ່ງໃສສມອງສ້ຽມ
ມີຫຼ່ຽມລົມຄົມກ້າ ປັນຍາດີແສນສລາດ
ຄວາມສາມາດເກັ່ງກ້າ ຜຍາລົ້ນລ່ຽນໄຫຼ

ສ່ວນມານດາກໍໃຫ້ໄດ້ ສຸຂພາບ ຂັນແຂງ
ໃຫ້ຢູ່ດີມີແຮງ ລ້ຽງບຸຕຕີຈະເຣີນກ້າ
ອັນວ່າໂຣຄາໄຂ້ ຫວັດໄອໃຫ້ໄກຫ່າງ

ຈິ່ງມີສຸຂສີບສ້າງ ຜົວເມັຽພ້ອມພໍ່າພຽງ



ສິ່ງສັກສິດຈິ່ງລໍ່າສ້ຽງ ລ້ຽງລູກງ່າຍຈະເຣີນດີ
ຢ່າໄດ້ມີບັນຫາ ຜູ້ເກີດມາເປັນຄົນຮູ້
ຢູ່ດອມກັນຢ່າມີເສົ້າ ຢຶດຖືເອົາຄວາມດຸຫມັ່ນ
ພ້ອມພຽງກັນກໍ່ສ້າງ ຢ່າໄດ້ປະປ່ອຍຮ້າງ ຄອບຄົວຫມັ້ນຮຸ່ງຈະເຣີນ

ທ້າຍນີ້ຂໍຮຽກເອີ້ນ ເຕືອນກ່າວອຸທາຫອນ
ແມ່ຕູ້ດອນ ຢ່າອິດສູ ແມ່ຕູ້ເອີຍ ຢ່າເຄັ່ງຮ້າຍ
ຄວນທີ່ດີໃຈແລ້ວ ແນວມີຫຼານຄືສຸຂຍິ່ງ
ຊິໄດ້ອູ້ມ ຊິໄດ້ສິງ ຊັກຜ້າອ້ອມທໍ່ຫຸ້ມ ຫຼານນ້ອຍຈົນໃຫຍ່ສູງ ຈິ່ງແລ້ວ